ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

..................

ແຂວງບໍ່ແກ້ວ

ເຈົ້າແຂວງ

ເລກທີ..໔໗໘..../ຈຂ-ບກ

ບໍ່ແກ້ວ,ວັນທີ..໒..ພຶດສະພາ..໒໐໑໖.

# ຄໍາສັ່ງ

## ຂອງທ່ານເຈົ້າແຂວງໆ ບໍ່ແກ້ວ

## ກ່ຽວກັບການຫ້າມປຸກສ້າງກິດຈະການຕ່າງໆລຽບຕາມແຄມແມ່ນໍ້າຂອງ ແລະ ລຽບຕາມເຂດສະຫງວນທາງເອັ້ນຕົວເມືອງ

**ເຖິງ:** ຫົວໜ້າພະແນກການ, ຫົວໜ້າອົງການຈັດຕັ້ງຕ່າງໆ, ເຈົ້າເມືອງໆ ຫ້ວຍຊາຍ ຕະຫຼອດຮອດ ປະຊາຊົນບັນດາເຜົ່າໃນທົ່ວເທດສະບານເມືອງຫ້ວຍຊາຍ ແຂວງບໍ່ແກ້ວ.

- **ອີງຕາມ:** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- **ອີງຕາມ:** ແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງແຕ່ນີ້ຮອດປີ 2020 ໂດຍສະເພາະໂຄງການຕ້ານ ຕາຝັ່ງເຈື່ອນລຽບຕາມແຄມແມ່ນໍ້າຂອງ ແລະ ໂຄງການປັບປຸງຂະຫຍາຍຜັງເມືອງເທດສະບານເມືອງຫ້ວຍຊາຍ.
- **ອີງຕາມ:** ກອງປະຊຸມຄະນະປະຈໍາພັກແຂວງໃນຄັ້ງວັນທີ 1 / 11 / 2015. ກ່ຽວກັບການປຶກສາຫາລື ແລະ ການ ກໍານົດຂອດເຂດການປັບປຸງ ແລະ ຂະຫຍາຍຜັງເມືອງຂອງເທດສະບານເມືອງໆຫ້ວຍຊາຍ, ແຂວງບໍ່ແກ້ວ. ເຊິ່ງ ໄດ້ກໍານົດຂອບເຂດຂະຫຍາຍຜັງເມືອງໃໝ່ເລີ່ມແຕ່ບ້ານດອນສະຫວັນລຽບຕີນພູບ້ານນໍ້າຄໍາ ຫາ ບ້ານຈອມຈຸກ ຕັດທາງ R3 ຢູ່ດອຍບ້ານນາແລ ຫາ ບ້ານສີບຸນເຮືອງລຽບຫຼັງພູ 106 ຫາ ພູຈອມແກ້ວອອກສູ່ທາງໄປຕົ້ນເຜີ້ງຢູ່ ເຂດບ້ານຫ້ວຍມອນ.
- **ອີງຕາມ:** ໜັງສືສະເໜີຂອງໂຄງການຊ່ວຍເຫຼືອທາງດ້ານວິຊາການ ສະບັບລົງວັນທີ 31.03.2014 ແລະ ສະບັບ ລົງວັນທີ 26.09.2013 ລະຫວ່າງລັດຖະບານແຫ່ງ ສ ປ ປ ລາວ ແລະ ທະນາຄານພັດທະນາອາຊີ ( ADB ). ໂຄງການພັດທະນາຕົວເມືອງຕາມແລວທາງເສດຖະກິດອານຸພາກພື້ນແມ່ນໍ້າຂອງ.

## ເຈົ້າແຂວງໆ ບໍ່ແກ້ວອອກຄໍາສັ່ງດັ່ງນີ້:

1. **ຂອບເຂດຂະຫຍາຍຜັງເມືອງຂອງເທດສະບານເມືອງຫ້ວຍຊາຍ.**

   - ຫ້າມບໍ່ໃຫ້ມີກິດຈະການປຸກສ້າງທຸກໆກິດຈະການລຽບຕາມແຄມທາງເອັ້ນຕົວເມືອງ ແຕ່ 4 ແຍກບ້ານນາແລ ຫາ ບ້ານຫ້ວຍມອນ, ແຕ່ໃຈກາງທາງອອກເບື້ອງລະ 15 ແມັດ, ລວມເປັນເສັ້ນທາງກວ້າງ 30 ແມັດ ( ໃນ 30 ແມັດ, ຈະສ້າງເສັ້ນທາງກວ້າງ 10 ແມັດ ແລະ ສະຫງວນທາງໄວ້ເບື້ອງລະ 10 ແມັດນັບແຕ່ຮ່ອງ ລະບາຍນໍ້າເບື້ອງນອກ ).

- ກິດຈະການໃດໆທີ່ມີການປຸກສ້າງໃສ່ດິນລັດ, ເຂດສະຫງວນຂອງທາງຫຼວງແຫ່ງຊາດ, ແຂວງ, ເມືອງ, ທີ່ໄດ້ກຳນົດໄວ້ໃນກົດໝາຍຜັງເມືອງ ສະບັບເລກທີ 03/99/ສພຊ, ລົງວັນທີ 03/04/1999 ແລະ ກົດໝາຍທາງຫຼວງ ສະບັບເລກທີ 04/99/ສພຊ, ລົງວັນທີ 03/04/1999, ຈະໄດ້ປະຕິບັດຕາມລະບຽບກົດໝາຍຄືຮື້ຖອນອອກໂດຍບໍ່ມີເງື່ອນໄຂຊົດເຊີຍໃດໆທັງສິ້ນ.

2. **ຂອບເຂດລຽບແຄມແມ່ນ້ຳຂອງ.**

- ຫ້າມບໍ່ໃຫ້ມີກິດຈະການປຸກສ້າງທຸກໆກິດຈະການລຽບແຄມແມ່ນ້ຳຂອງ ເລີ່ມແຕ່ສະຖານີດູດນ້ຳທີ່ໂຮງຮຽນ ມ ປາຍ ລົງຮອດສົ້ນຂົວມິດຕະພາບແຫ່ງທີ່ **IV** ( ບ້ານດອນສະຫ້ອນ ) ເນື່ອງຈາກວ່າຈະເລີ່ມລົງມືຈັດຕັ້ງປະຕິບັດໂຄງການ ຕ້ານຕາຝັ່ງເຈື່ອນລຽບແຄມແມ່ນ້ຳຂອງໃນໄວໆນີ້.
- ຫ້າມປຸກສ້າງກິດຈະການທີ່ນອນຢູ່ໃນພື້ນທີ່ເປົ້າໝາຍພັດທະນາ ຂອງໂຄງການພັດທະນາຕົວເມືອງຕາມແລວທາງເສດຖະກິດອະນຸພາກພື້ນແມ່ນ້ຳຂອງແຕ່ທ່າເຮືອບັກບ້ານຂອນແກ້ວ ຫາ ເຂດບ້ານມີໄຊສະຫ່ວາງ ເມືອງຫ້ວຍຊາຍ ເພື່ອເຊື່ອມຕໍ່ກັບເຂດພັດທະນາດອນປຸງ.
- ກິດຈະການໃດທີ່ມີການປຸກສ້າງໃສ່ດິນຂອງລັດ, ເຂດສະຫງວນຂອງແມ່ນ້ຳຂອງ ເຂດສະຫງວນທາງ ຈະໄດ້ປະຕິບັດຕາມລະບຽບກົດໝາຍຄືຮື້ຖອນອອກໂດຍບໍ່ມີເງື່ອນໄຂຊົດເຊີຍໃດໆທັງສິ້ນ.

3. ໃຫ້ເຈົ້າເມືອງ, ຫົວໜ້າພະແນກ, ກົມກອງ, ກຸ່ມບ້ານ - ນາຍບ້ານແຕ່ລະບ້ານ ແລະ ຫົວໜ້າອົງການຈັດຕັ້ງຕ່າງໆ ພ້ອມກັນຜັນຂະຫຍາຍຄຳສັ່ງສະບັບນີ້ໃຫ້ປະຊາຊົນຮັບຊາບທົ່ວເຖິງ ແລະ ກວ້າງຂວາງ.
4. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ຢ່າງເຂັ້ມງວດ.
5. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງໆ ບໍ່ແກ້ວ**

**ດຣ.ຄຳພັນ ເຜີຍຍະວົງ**